ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງຄຳມ່ວນ
ຄະນະປະຈຳ

ເລກທີ 153../ຄປຈ.ສພຂ
ຄຳມ່ວນ, ວັນທີ 27...ທັນວາ...2021

ມະຕິ
ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
ຂອງຄະນະກຳມະການ ເສດຖະກິດ ແຜນການ ແລະ ການເງິນ

- ອີງຕາມ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015;
- ອີງຕາມ ມະຕິ ຂອງຄະນະປະຈຳສະພາປະຊາຊົນແຂວງ ຄຳມ່ວນ ຊຸດທີ I ສະບັບເລກທີ 26/ຄປຈ.ສພຂ, ລົງວັນທີ 11 ຕຸລາ 2016.
- ອີງຕາມ: ການສະເໜີຂອງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະບັບເລກທີ 51/ຄສຜງ, ລົງວັນທີ 24 ທັນວາ 2021.

ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ຕົກລົງ:

ໝວດທີ I
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ມະຕິຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ, ລະບອບປະຊຸມ, ລະບອບການເຮັດວຽກ ແລະ ກົນໄກການປະສານງານຂອງຄະນະກຳມະການ ເສດຖະກິດ, ແຜນການ ແລະ ການເງິນ ເພື່ອແນໃສ່ການປັບປຸງອຳນາດລັດຂັ້ນທ້ອງຖິ່ນ, ເຮັດໃຫ້ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານມີຜົນສຳເລັດຕາມລະດັບຄາດໝາຍ ພ້ອມທັງຮັບປະກັນການຈັດຕັ້ງປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະກຳມະການໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ມາດຕາ 2 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ

2.1 ທີ່ຕັ້ງ

ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ແມ່ນກົງຈັກການຈັດຕັ້ງຂອງສະພາປະຊາຊົນ ຂັ້ນແຂວງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເຊິ່ງປະກອບດ້ວຍບັນດາສະມາຊິກສະພາປະຊາຊົນ ແຂວງ ປະຈຳເຂດເລືອກຕັ້ງເມືອງ ຕາມການຮັບຮອງເອົາໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນ ຂັ້ນແຂວງໃນແຕ່ລະຊຸດ.

สแกนด้วย CamScanner

ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ມີອາຍຸການ 5 ປີ ເທົ່າກັບອາຍຸການຂອງສະພາປະຊາຊົນຂັ້ນແຂວງ ແລະ ມີຊື່ຫຍໍ້ເປັນຕົວອັກສອນ " ຄສຜງ ".

2.2 (ປັບປຸງ) ພາລະບົດບາດ

ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ມີພາລະບົດບາດເປັນເສນາທິການໃຫ້ສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ ໃນການສ້າງ ແລະ ປັບປຸງນິຕິກຳ, ການຄົ້ນຄ້ວາບັນຫາສຳຄັນຂອງແຂວງ, ຕິດຕາມກວດກາ ແລະ ການຊຸກຍູ້ຈັດຕັ້ງປະຕິບັດລັດຖະທຳມະນຸນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິຂອງສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ - ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ, ວຽກງານກວດສອບ - ກວດກາ ແລະ ການແກ້ໄຂຄຳຮ້ອງ - ຄຳສະເໜີ ໃນຂົງເຂດກະສິກຳ ແລະ ປ່າໄມ້, ອຸດສາຫະກຳ ແລະ ການຄ້າ, ພະລັງງານ ແລະ ບໍ່ແຮ່, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໂຍທາທິການ ແລະ ຂົນສົ່ງ, ເຕັກໂນໂລຊີ ແລະ ການສື່ສານ, ແຜນການ ແລະ ການລົງທຶນ , ການເງິນ, ທະນາຄານ, ສະຖາບັນການເງິນ, ການກວດສອບ, ກວດກາລັດ, ອົງການອຳນາດລັດຂັ້ນແຂວງ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ.

ມາດຕາ 3 (ໃໝ່) ຂອບເຂດການນຳໃຊ້

ມະຕິ ສະບັບນີ້ນຳໃຊ້ສະເພາະກຳມະການ ເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ ຄຳມ່ວນ.

ໝວດທີ 2
ສິດ ແລະ ໜ້າທີ່ຂອງ ຄະນະກຳມະການ

ມາດຕາ 4 ສິດ ແລະ ໜ້າທີ່

4.1. ດ້ານນິຕິກຳ

1. ຄົ້ນຄວ້າ, ກວດກາ ແລະ ປະກອບຄຳເຫັນໃສ່ ຮ່າງນິຕິກຳຂອງ ອົງການລັດຂັ້ນແຂວງ ຕາມຄວາມຮັບຜິດຊອບຂອງຕົນ ຫຼື ຕາມການມອບໝາຍຂອງ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;
2. ຄົ້ນຄ້ວາ, ປະກອບຄຳເຫັນໃສ່ຮ່າງກົດໝາຍ ທີ່ສະພາແຫ່ງຊາດສົ່ງໃຫ້ ຕາມການມອບໝາຍຂອງ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;
3. ຄົ້ນຄ້ວາການໂຈະການຈັດຕັ້ງປະຕິບັດ, ການປັບປຸງ, ຍົກເລີກ, ລົບລ້າງ ນິຕິກຳຂອງອົງການລັດຂັ້ນແຂວງ ແລ້ວນຳສະເໜີຕໍ່ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ ພິຈາລະນາ;
4. ໂຄສະນາ, ເຜີຍແຜ່ລັດຖະທຳມະນຸນ, ກົດໝາຍ ແລະ ນິຕິກຳອື່ນ ຕາມຄວາມຮັບຜິດຊອບຂອງຕົນ ຫຼື ຕາມການມອບໝາຍຂອງ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ.

1.2. ດ້ານການຕິກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ

1. ສ້າງຮ່າງແຜນການເຄື່ອນໄຫວວຽກງານຂອງຕົນແຕ່ລະໄລຍະ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດແຜນການດັ່ງກ່າວໃຫ້ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ ຢ່າງເປັນປົກກະຕິ;
2. ຊ່ວຍ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ ກະກຽມກອງປະຊຸມ ສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຮ່ວມກັບອົງການລັດຂັ້ນແຂວງ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ;
3. ຄົ້ນຄວ້າ ແລະ ສະເໜີບັນຫາສຳຄັນ ທີ່ມີຄວາມຫຍຸ້ງຍາກພາຍໃນແຂວງຕໍ່ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາ;
4. ປະສານສົມທົບກັບ ຄະນະກຳມະການດ້ວຍກັນ ຫຼື ກັບອົງການລັດຂັ້ນແຂວງ ໃນການ ເຄື່ອນໄຫວ

สแกนด้วย CamScanner

ວຽກງານທີ່ກ່ຽວຂ້ອງ ກັບພາລະບົດບາດຂອງຕົນ;

5. ພົວພັນຮ່ວມມືກັບການຈັດຕັ້ງ ສະພາປະຊາຊົນຂັ້ນແຂວງ ຂອງຕ່າງປະເທດ ຕາມການມອບໝາຍ ຂອງ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ.
7. ເຂົ້າຮ່ວມແຕ່ຫົວທີກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າປະກອບຄຳເຫັນ ໃສ່ຮ່າງແຜນພັດທະນາເສດຖະກິດ - ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ຕາມຄວາມຮັບຜິດຊອບຂອງຕົນ;
8. ສົມທົບກັບອົງການລັດຂັ້ນແຂວງທີ່ກ່ຽວຂ້ອງ ສ້າງແຜນການຈັດເກັບລາຍຮັບ - ລາຍຈ່າຍປະຈຳປີ ຕາມຄວາມຮັບຜິດຊອບຂອງຕົນ ຫຼື ຕາມການມອບໝາຍຂອງ ຄະນະປະຈຳ ສະພາປະຊາຊົນຂັ້ນ ແຂວງ;
9. ຄົ້ນຄວ້າ, ປະກອບຄຳເຫັນໃສ່ແຜນການແບ່ງປັນງົບປະມານປະຈຳປີຂອງແຂວງ ຕາມການສະເໜີຂອງ ເຈົ້າແຂວງ;
10. ຄົ້ນຄວ້າ, ປະກອບຄຳເຫັນໃສ່ແຜນໂຄງການລົງທຶນຂອງລັດ ປະຈຳປີ ຂອງແຂວງ ໃນຂອບເຂດຄວາມ ຮັບຜິດຊອບຂອງຕົນ ຫຼື ຕາມການມອບໝາຍຂອງ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;
11. ຄົ້ນຄ້ວາແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂອງປະຊາຊົນພາຍໃນແຂວງ ຕາມ ຂອບເຂດຕົນເອງຮັບຜິດຊອບ ຫຼື ຕາມການມອບໝາຍຂອງ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;
12. ຄົ້ນຄວ້າ, ປະກອບຄຳເຫັນໃສ່ບົດລາຍງານຜົນຂອງການກວດສອບ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິ ບັດແຜນງົບປະມານແຫ່ງລັດຂອງແຂວງ ແລະບົດລາຍງານຂອງອົງການກວດກາລັດແຂວງ ຕາມຂອງເຂດ ຄວາມຮັບຜິດຊອບຂອງຕົນ ຫຼື ຕາມການມອບໝາຍຂອງ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;
13. ທວງເອົາເອກະສານ ຮ່າງແຜນພັດທະນາເສດຖະກິດ - ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ, ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ແລະ ບົດລາຍງານການກວດກາຕາມຜົນການກວດສອບ ຈາກອົງການທີ່ກ່ຽວຂ້ອງ ເພື່ອຄົ້ນຄ້ວາ, ກວດກາ ເນື້ອໃນ ແລ້ວລາຍງານໃຫ້ ຄະນະປະຈຳ ສະພາປະຊາຊົນແຂວງ ກ່ອນນຳເຂົ້າພິຈາລະນາ ໃນກອງ ປະຊຸມ ສະພາປະຊາຊົນຂັ້ນແຂວງ.
14. ຄົ້ນຄວ້າ ແລະ ປັບປຸງ ກົງຈັກການຈັດຕັ້ງຊ່ວຍວຽກຄະນະກຳມະການ ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ ໃນແຕ່ລະໄລຍະ ໃຫ້ມີຄວາມເໝາະສົມ;
15. ຍົກລະດັບຄວາມຮູ້, ຄວາມສາມາດຂອງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກ ສະພາປະຊາຊົນຂັ້ນແຂວງ ທີ່ສັງກັດຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ພະນັກງານ - ລັດຖະກອນ ທີ່ເປັນເສນາທິການ ດ້ວຍຫຼາຍຮູບແບບ ແລະ ໃຫ້ມີຄຸນນະພາບ;
16. ສະເໜີແຕ່ງຕັ້ງ, ຍົກຍ້າຍ ບຸກຄະລາກອນ ສັງກັດໃນການຈັດຕັ້ງຂອງ ຄະນະກຳມະການ.

4.3 ດ້ານການຕິດຕາມກວດກາ

1. ຕິດຕາມກວດກາບັນດາອົງການລັດຂັ້ນແຂວງ ໃນຂົງເຂດຕົນເອງຮັບຜິດຊອບ ໃນການຈັດຕັ້ງ ປະຕິບັດລັດຖະທຳມະນຸນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມຄະນະປະຈຳ ສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ມະຕິກອງປະ ຊຸມຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;
2. ຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມ, ແຜນງົບປະມານ, ແຜນ ໂຄງການລົງທຶນ, ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂອງປະຊາຊົນພາຍໃນ

สแกนด้วย CamScanner

ແຂວງ ທີ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ກອງປະຊຸມຄະນະປະຈຳ ສະພາປະຊາຊົນຂັ້ນ ແຂວງ ຮັບຮອງເອົາ;

3. ລົງພົບປະ, ເກັບກຳບັນຫາ, ຄຳສະເໜີ, ຄຳຄິດ - ຄຳເຫັນຕ່າງໆຂອງປະຊາຊົນ, ເຜີຍແຜ່ຜົນສຳເລັດ ກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງແຕ່ລະຄັ້ງ;
4. ຮັບຕ້ອນ ແລະ ຟັງຄຳຄິດ - ຄຳເຫັນຂອງປະຊາຊົນ ກ່ຽວກັບບັນຫາຕ່າງໆ;
5. ຕິດຕາມກວດກາກ່ຽວກັບການອອກຂໍ້ຕົກລົງ, ຄຳແນະນຳ ແລະ ການຈັດຕັ້ງປະຕິບັດວຽກງານ ຂອງ ອົງການບໍລິຫານລັດຂັ້ນແຂວງ ຕາມຂອບເຂດຕົນຮັບຜິດຊອບ;
6. ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານທາງດ້ານການເມືອງ ແລະ ການປົກຄອງ, ດ້ານ ເສດຖະກິດ - ສັງຄົມ, ດ້ານການຈັດຕັ້ງ ແລະ ບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງ ຮັບ ຮອງ ເອົາ ຕາມຂອບເຂດຕົນຮັບຜິດຊອບ;
7. ຕິດຕາມກວດກາລາຍຮັບ - ລາຍຈ່າຍ ງົບປະມານຂັ້ນແຂວງ ແລະ ຂັ້ນເມືອງ;
8. ສອບຖາມເພື່ອໃຫ້ຄວາມກະຈ່າງແຈ້ງ ຂອງອົງການປົກຄອງແຂວງ, ຫົວໜ້າພະແນກການຂັ້ນແຂວງ, ເຈົ້າເມືອງ, ນາຍບ້ານ ກ່ຽວກັບບັນຫາໃດໜຶ່ງທີ່ຄະນະກຳມະການຕົນມີຄວາມສົນໃຈ;
9. ຕິດຕາມກວດກາການແກ້ໄຂຄຳຮ້ອງ - ຄຳສະເໜີ ຂອງອົງການບໍລິຫານລັດຂັ້ນແຂວງ ຕາມຂອບເຂດ ຄວາມຮັບຜິດຊອບຂອງຕົນ;
10. ແຕ່ງຕັ້ງໜ່ວຍງານສະເພາະກິດ ເມື່ອຫາກມີຄວາມຈຳເປັນ ຫຼື ໄດ້ຮັບການມອບໝາຍຈາກ ຄະນະປະ ຈຳ ສະພາປະຊາຊົນຂັ້ນແຂວງ ເພື່ອລົງຕິດຕາມກວດກາ, ເກັບກຳຂໍ້ມູນກ່ຽວກັບບັນຫາໃດໜຶ່ງຢູ່ ພາຍໃນແຂວງຕົນ;
11. ສ້າງແຜນການຕິດຕາມກວດກາ ໂດຍອີງໃສ່ແຜນການຕິດຕາມກວດກາຂອງ ກອງປະຊຸມສະພາ ປະຊາຊົນຂັ້ນແຂວງ, ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ ແລະ ສະພາບຕົວຈິງພາຍໃນແຂວງ;
12. ພິຈາລະນາຄຳຮ້ອງ - ຄຳສະເໜີ, ຜົນການຕິດຕາມກວດກາ ເພື່ອນຳສະເໜີຕໍ່ ຄະນະປະຈຳ ສະ ພາ ປະຊາຊົນຂັ້ນແຂວງ ພິຈາລະນາແກ້ໄຂ.

ໝວດທີ 3
ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

ມາດຕາ 5 ໂຄງປະກອບກົງຈັກ

ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ປະກອບ ມີ ສອງ ຂະແໜງການຊ່ວຍວຽກ ຄື:

- ຂະແໜງເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ;
- ຂະແໜງແຜນການ, ການເງິນ ແລະ ກວດສອບ.

ມາດຕາ 6 ໂຄງປະກອບບຸກຄະລາກອນ

- ປະທານ ຄະນະກຳມະການ;
- ຮອງປະທານ ຄະນະກຳມະການ;
- ກຳມະການ ສັງກັດຄະນະກຳມະການ ເຊິ່ງປະຈຳຢູ່ບັນດາຂະແໜງການ ແລະ ບັນດາເຂດເລືອກຕັ້ງເມືອງ;
- ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ວິຊາການຊ່ວຍວຽກແມ່ນໄດ້ກຳນົດໄວ້ໃນລະບຽບ ສະເພາະ.

สแกนด้วย CamScanner

ມາດຕາ 7 ສິດ ແລະ ໜ້າທີ່ຂອງປະທານ

1. ຊີ້ນຳ - ນຳພາວຽກງານລວມ, ວຽກງານແນວຄິດການເມືອງ, ການຈັດຕັ້ງຂອງຄະນະກຳມະການ ແລະ ຮັບຜິດຊອບໂດຍກົງ ໃນການລາຍງານວຽກງານຮອບດ້ານຂອງຄະນະກຳມະການຕໍ່ ຄນະປະຈຳ ສະພາປະຊາຊົນຂັ້ນແຂວງ;
2. ຊີ້ນຳການສ້າງແຜນການເຄື່ອນໄຫວວຽກງານຂອງ ຄະນະກຳມະການ ໃນແຕ່ລະໄລຍະ, ມອບໝາຍ ແລະ ແບ່ງຄວາມຮັບຜິດຊອບ ໃຫ້ຮອງປະທານ ຄະນະກຳມະການ ແລະ ກຳມະການສັງກັດໃນຄະນະກຳມະການ ໃນການປະຕິບັດໜ້າທີ່ວຽກງານຂອງຄະນະກຳມະການຕົນ;
3. ຊີ້ນຳ ແລະ ລົງເລິກວຽກງານສ້າງ ແລະ ປັບປຸງນິຕິກຳ, ວຽກງານສຳຄັນພື້ນຖານ ແລະ ວຽກງານຕິດຕາມກວດກາ ໃນລະດັບຂັ້ນແຂວງ;
4. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມກວດກາການເຄື່ອນໄຫວວຽກງານຂອງ ຄະນະກຳມະການ, ຂະແໜງ ການ ແລະ ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
5. ຮຽກໂຮມ ແລະ ເປັນປະທານກອງປະຊຸມ ຄະນະກຳມະການ ແລະ ປະຊຸມຄົບຄະນະຂອງ ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ;
6. ອອກແຈ້ງການ ແລະ ເຊັນເອກະສານຕ່າງໆ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະກຳມະການຕົນ;
7. ສະເໜີແຕ່ງຕັ້ງ, ຍົກຍ້າຍ, ຊັບຊ້ອນ ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ, ແຕ່ງຕັ້ງ ພະນັກງານເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ ຫຼື ຮັບຜິດຊອບວຽກງານໃດໜຶ່ງທີ່ພົວພັນກັບວຽກງານຂອງຄະນະກຳມະການຕົນ;
8. ຮຽກເຊີນຄະນະນຳຂອງພະແນກການຕ່າງໆອ້ອມຂ້າງແຂວງ ພາຍໃນຄວາມຮັບຜິດຊອບຂອງຕົນເຂົ້າຊີ້ແຈງ ແລະ ອະທິບາຍເພີ່ມເຕີມ ຕໍ່ກັບບາງບັນຫາທີ່ເຫັນວ່າບໍ່ທັນຈະແຈ້ງ ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ ແລະ ກອງປະຊຸມສະພາປະຊາ ຊົນຂັ້ນແຂວງ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ.

ມາດຕາ 8 (ປັບປຸງ) ສິດ ແລະ ໜ້າທີ່ຂອງຮອງປະທານ.

1. ຮັບຜິດຊອບຊີ້ນຳວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ ຄະນະກຳມະການ;
2. ຄົ້ນຄ້ວາ, ປະກອບຄຳເຫັນ ແລະ ກວດກາບັນດາເອກະສານຕ່າງໆ ທີ່ຢູ່ໃນຂົງເຂດວຽກງານທີ່ຕົນຮັບຜິດຊອບ;
3. ຕົກລົງບັນຫາ, ລົງລາຍເຊັນໃສ່ເອກະສານຕ່າງໆ ແລະ ປະຕິບັດໜ້າທີ່ແທນປະທານ ຄະນະກຳມະການ ໃນກໍລະນີທີ່ໄດ້ຮັບມອບສິດຈາກ ປະທານ ຄະນະກຳມະການ;
4. ຊີ້ນຳວຽກງານວິຊາສະເພາະ ແລະ ກວດກາການເຄື່ອນໄຫວວຽກງານ ຂອງຂະແໜງທີ່ຕົນຊີ້ນຳ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງປະທານ ຄະນະກຳມະການ ຫຼື ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ.
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງປະທານຄະນະກຳມະການ ຫຼື ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ

ມາດຕາ 9 ສິດ ແລະ ໜ້າທີ່ຂອງກຳມະການ

1. ຜັນຂະຫຍາຍເນື້ອໃນນິຕິກຳ ແລະ ແຜນການເຄື່ອນໄຫວວຽກງານຂອງຄະນະກຳມະການ ເປັນແຜນການເຄື່ອນໄຫວວຽກງານຕົວຈິງ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ;

สแกนด้วย CamScanner

2. ຄົ້ນຄ້ວາ ປະກອບຄຳເຫັນໃສ່ຮ່າງນິຕິກຳ ຫຼື ເອກະສານຕ່າງໆ ທີ່ຄະນະກຳມະການສົ່ງໃຫ້;
3. ເຂົ້າຮ່ວມແຕ່ຫົວທີກ່ຽວກັບການຄົ້ນຄວ້າ, ສ້າງຮ່າງແຜນພັດທະນາເສດຖະກິດ - ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ;
4. ຊັກຖາມພະແນກການທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວວຽກງານ, ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ;
5. ລົງພົບປະ ແລະ ເກັບກຳຄຳສະເໜີ, ຄຳຄິດ - ຄຳເຫັນ ຂອງປະຊາຊົນ ແລ້ວນຳສະເໜີຄະນະກຳມະການທີ່ຕົນສັງກັດ ຫຼື ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາຕາມພາລະບົດບາດ;
6. ເຂົ້າຮ່ວມກັບຄະນະກຳມະການ ຫຼື ຄະນະປະຈຳ ສະພາປະຊຸມຂັ້ນແຂວງ ໃນການພິຈາລະນາ ແລະ ແກ້ໄຂຄຳຮ້ອງ - ຄຳສະເໜີ;
7. ເຂົ້າຮ່ວມກັບຄະນະກຳມະການ ຫຼື ຄະນະປະຈຳ ສະພາປະຊຸມແຂວງ ຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນຸນ, ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍໃນຂົງເຂດທີ່ຕົນຮັບຜິດຊອບ;
8. ເຂົ້າຮ່ວມກອງປະຊຸມຄົບຄະນະຂອງ ຄະນະກຳມະການ, ສະເໜີບັນຫາ, ປະກອບຄຳເຫັນ ແລະ ລົງຄະແນນສຽງຮັບຮອງເອົາບັນຫາທີ່ນຳມາພິຈາລະນາໃນກອງປະຊຸມ;
9. ແຈ້ງເປັນລາຍລັກອັກສອນ ໃຫ້ປະທານຄະນະກຳມະການຮັບຊາບ ໃນກໍລະນີ ທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ ກ່ອນມື້ໄຂກອງປະຊຸມ;
10. ສະຫຼຸບ, ຕີລາຄາ, ລາຍງານຜົນຂອງການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ ໃນແຕ່ລະໄລຍະຢ່າງເປັນປົກກະຕິ ຕໍ່ປະທານຄະນະກຳມະການ. ໃນກໍລະນີທີ່ມີບັນຫາ ຫຼື ສະພາບການທີ່ຜິດປົກ ເກີດຂຶ້ນໃນເຂດເລືອກຕັ້ງຂອງຕົນ ຕ້ອງລາຍງານຢ່າງຮີບດ່ວນ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງປະທານຄະນະກຳມະການ.

ມາດຕາ 10 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງຊ່ວຍວຽກ.

ສິດ ແລະ ໜ້າທີ່ຂອງຂະແໜງຊ່ວຍວຽກ ແມ່ນໄດ້ກຳນົດໄວ້ໃນລະບຽບການສະເພາະ ແລະ ຕາມການມອບໝາຍຂອງປະທານ ຫຼື ຮອງປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ.

ໝວດທີ 4
ກອງປະຊຸມຂອງຄະນະກຳມະການ

ມາດຕາ 11 ກອງປະຊຸມຂອງຄະນະກຳມະການ

ກອງປະຊຸມຂອງຄະນະກຳມະການ ເສດຖະກິດ, ແຜນການ ແລະ ການເງິນມີ ສອງ ປະເພດຄື:

- ກອງປະຊຸມຄະນະກຳມະການ;
- ກອງປະຊຸມຄົບຄະນະຂອງຄະນະກຳມະການ.

ມາດຕາ 12 ກອງປະຊຸມຄະນະກຳມະການ

ກອງປະຊຸມຄະນະກຳມະການ ແມ່ນກອງປະຊຸມປຶກສາຫາລືວຽກງານເປັນປົກກະຕິ ທີ່ເປີດຂຶ້ນຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນປະທານເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ ຊຶ່ງມີຮອງປະທານ, ກຳມະການ ສັງກັດພາຍໃນຄະນະກຳມະການ, ຂະແໜງການຊ່ວຍວຽກເຂົ້າຮ່ວມ.

สแกนด้วย CamScanner

ກອງປະຊຸມຄະນະກຳມະການມີເນື້ອໃນ ດັ່ງນີ້:

1. ຜ່ານບົດສະຫຼຸບ ການເຄື່ອນໄຫວວຽກງານປະຈຳເດືອນຜ່ານມາ ແລະ ແຜນການເຄື່ອນໄຫວວຽກງານປະຈຳເດືອນຕໍ່ໜ້າ ຂອງຄະນະກຳມະການ;
2. ຄົ້ນຄ້ວາສ້າງຮ່າງນິຕິກຳທີ່ພົວພັນກັບວຽກງານຂອງຄະນະກຳມະການຕົນ ແລະ ປະກອບຄຳເຫັນ ໃສ່ຮ່າງນິຕິກຳຕ່າງໆ ຂອງບັນດາຄະນະກຳມະການອື່ນ ຫຼື ຂອງຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;
3. ປຶກສາຫາລືການປະຕິບັດວຽກງານຕົວຈິງ ເປັນຕົ້ນເນື້ອໃນ, ວິທີການ ແລະ ຮູບການຕິດຕາມກວດກາ ໃນຂົງເຂດວຽກງານທີ່ ຄະນະກຳມະການຕົນຮັບຜິດຊອບ;
4. ຄົ້ນຄ້ວາ, ວິໄຈສະພາບການ, ບັນຫາທີ່ພົ້ນເດັ່ນ ທີ່ພົວພັນກັບຄະນະກຳມະການຕົນ ແລະ ສະເໜີມາດຕະການໃນການແກ້ໄຂ ເພື່ອລາຍງານໃຫ້ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ ພິຈາລະນາ ແລະ ໃຫ້ທິດຊີ້ນຳ;
5. ຮັບຟັງການລາຍງານຂອງພະແນກການ ແລະ ອົງການລັດທຽບເທົ່າພະແນກຂັ້ນແຂວງ ທີ່ກ່ຽວຂ້ອງ ກ່ຽວກັບບັນຫາທີ່ສົນໃຈ ແລະ ປະກອບຄຳຄິດຄຳເຫັນ, ໃຫ້ຄຳແນະນຳກ່ຽວກັບ ການແກ້ໄຂບັນຫາທີ່ຍັງຄ້າງຄາ;
6. ກະກຽມກອງປະຊຸມ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ ແລະ ວຽກງານອື່ນທີ່ຈຳເປັນ.

ມາດຕາ 13 ກອງປະຊຸມຄົບຄະນະຂອງຄະນະກຳມະການ

ກອງປະຊຸມຄົບຄະນະຂອງຄະນະກຳມະການ ແມ່ນກອງປະຊຸມປຶກສາຫາລືວຽກງານປະຈຳປີ ທີ່ເປີດຂຶ້ນຢ່າງໜ່ອຍປີລະເທື່ອ ໂດຍການຮຽກໂຮມ ແລະ ການເປັນປະທານຂອງ ປະທານ ຄະນະກຳມະການ ເສດຖະກິດ, ແຜນການ ແລະ ການເງິນ ຕາມການເຫັນດີຂອງ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ ຊຶ່ງມີກຳມະການ ສັງກັດຄະນະກຳມະການເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມຂອງຈຳນວນກຳມະການທັງໝົດ.

ກອງປະຊຸມຄົບຄະນະຂອງຄະນະກຳມະການ ຈະເປີດຂຶ້ນໃນເວລາໃດກໍ່ໄດ້ ຫຼື ຈະເປີດຮ່ວມກັບຄະນະກຳມະການອື່ນ ແລະ ເຊີນບຸກຄົນ ທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມນຳກໍ່ໄດ້ ຕາມການເຫັນດີຂອງ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມຄົບຄະນະຂອງຄະນະກຳມະການ ພິຈາລະນາບັນຫາຕ່າງໆ ດັ່ງນີ້:

1. ບົດລາຍງານການເຄື່ອນໄຫວວຽກງານໃນໄລຍະ 1 ປີຜ່ານມາ ແລະ ທິດທາງແຜນການວຽກງານໃນປີຕໍ່ໜ້າ ຂອງຄະນະກຳມະການ;
2. ຄົ້ນຄ້ວາປະກອບຄຳເຫັນໃສ່ຮ່າງກົດໝາຍ, ຮ່າງນິຕິກຳ;
3. ຮັບຟັງການລາຍງານຂອງພະແນກການ ແລະ ອົງການທຽບເທົ່າພະແນກຂັ້ນແຂວງ ທີ່ກ່ຽວຂ້ອງກ່ຽວກັບບັນຫາທີ່ສົນໃຈ ແລະ ປະກອບຄຳຄິດຄຳເຫັນໃຫ້ຄຳແນະນຳໃນການແກ້ໄຂບັນຫາທີ່ຍັງຄ້າງຄາ
4. ວຽກງານອື່ນໃນຂົງເຂດທີ່ຕົນຮັບຜິດຊອບ.

ໝວດທີ 5
ລະບອບແບບແຜນວິທີເຮັດວຽກ

ມາດຕາ 14 (ໃໝ່) ຫຼັກການ

ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ເຄື່ອນໄຫວຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະຖືເອົາປ່ອນປະຊຸມເປັນປ່ອນປຶກສາຫາລື ແລະ ຕົກລົງບັນຫາຕາມສຽງສ່ວນຫຼາຍ ມີຄວາມຮັບຜິດຊອບບົນພື້ນລັກຖະທຳມະນູນ ແລະ ທີ່ກົດໝາຍໄດ້ກຳນົດໄວ້.

สแกนด้วย CamScanner

ມາດຕາ 15 (ໃໝ່) ແບບແຜນວິທີເຮັດວຽກ

ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ເຄື່ອນໄຫວວຽກງານ ດ້ວຍລະບອບກອງປະຊຸມ, ມີການແບ່ງວຽກ, ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນ ໂດຍຫັນແຜນການຂອງສະພາປະຊາຊົນຂັ້ນແຂວງ, ມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ປະຕິບັດໃຫ້ສຳເລັດ, ມີການກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ປະຕິບັດລະບອບການລາຍງານ, ຂໍຄຳເຫັນຊີ້ນຳຈາກຂັ້ນເທິງຂອງຕົນ ແລະ ປະສານສົມທົບກັບການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ.

ມາດຕາ 16 ການປະສານງານ

ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ມີການພົວພັນ ແລະ ປະສານສົມທົບກັບ ຄະນະກຳມະການອື່ນ, ກັບຄະນະຮອງຂາທິການ ສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງດ້ວຍຮູບການຈັດກອງປະຊຸມ, ປຶກສາຫາລື, ປະສານສົມທົບ ແລະ ການແລກປ່ຽນຂໍ້ມູນຂ່າວສານ, ການຖອດຖອນບົດຮຽນຊຶ່ງກັນ ແລະ ກັນ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເພື່ອຮັບປະກັນເຮັດໃຫ້ການຄົ້ນຄ້ວາພິຈາລະນາບັນຫາຕ່າງໆ ມີຄວາມເປັນເອກະພາບກັນ ແລະ ມີຄວາມຖືກຕ້ອງຕາມກົດໝາຍ.

ໝວດທີ 6
ບົດບັນຍັດສຸດທ້າຍ

ມາດຕາ 17 ງົບປະມານ ຂອງຄະນະກຳມະການ

ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ມີງົບປະມານຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານຂອງຕົນ ຕາມງົບປະມານຂອງ ສະພາປະຊາຊົນຂັ້ນແຂວງ ທີ່ໄດ້ຈັດແບ່ງໃຫ້ຕາມສົມກັບງົບປະມານ.

ມາດຕາ 18 ຕາປະທັບ ຂອງຄະນະກຳມະການ

ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ມີຕາປະທັບສະເພາະຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ຂອບວົງມົນເບື້ອງເທິງຂຽນວ່າ " ສະພາປະຊາຊົນແຂວງ ຄຳມ່ວນ " ເບື້ອງລຸ່ມຂຽນຊື່ " ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ " ຊຶ່ງຂຶ້ນດ້ວຍຮູບດາວຫ້າແຈ.

ມາດຕາ 19 ການຈັດຕັ້ງປະຕິບັດ

ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ຄະນະກຳມະການອື່ນໆ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 20 ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ມະຕິສະບັບເລກທີ 26/ຄປຈ.ສພຂ, ລົງວັນທີ 11 ຕຸລາ 2016.

ຄະນະປະຈຳ ສະພາປະຊາຊົນແຂວງຄຳມ່ວນ
ປະທານ

ບຸນມີ ພິມມະສອນ

สแกนด้วย CamScanner